ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 001 ປປທ
ລົງວັນທີ 31.01.2012

# ລັດຖະບັນຍັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ວ່າດ້ວຍ ການແບ່ງປັນລາຍຮັບຈາກການຂາຍໄມ້ ທີ່ຊຸດຄົ້ນໃນເຂດປ່າຜະລິດ.

-------------------------

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 2 ສະບັບປັບປຸງ;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 029 /ຄປຈ, ລົງວັນທີ 16 ມັງກອນ 2012.

*ປະທານປະເທດ*

*ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ :*

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ລັດຖະບັນຍັດສະບັບນີ້ ກຳນົດຫລັກການ, ລະບຽບການ ກ່ຽວກັບການແບ່ງປັນ, ຄຸ້ມຄອງ ແລະ ນຳໃຊ້ ລາຍຮັບຈາກການຂາຍໄມ້ ທີ່ຊຸດຄົ້ນໃນເຂດປ່າຜະລິດ ເພື່ອເປັນແຫລ່ງງົບປະມານໃຫ້ແກ່ວຽກງານຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ເປັນຕົ້ນ ປ່າຜະລິດ; ເປັນທຶນ ພັດທະນາບ້ານ ຫລື ກຸ່ມບ້ານ ທີ່ມີເຂດແດນຕິດກັບປ່າຜະລິດ, ແນໃສ່ຮັບປະກັນໃຫ້ມີແຫລ່ງງົບປະມານທີ່ໝັ້ນທ່ຽງ, ສະໜອງໃຫ້ແກ່ວຽກງານ ພັດທະນາປ່າໄມ້ ແລະ ປະກອບສ່ວນຊຸກຍູ້ສົ່ງເສີມການຜະລິດ, ແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ, ຮັບປະກັນໃຫ້ປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການເຂົ້າຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າຜະລິດແບບຍືນນານ.

**ມາດຕາ 2. ການເກັບລາຍຮັບຈາກການຂາຍໄມ້ ທີ່ຂຸດຄົ້ນໃນເຂດປ່າຜະລິດ**

ລາຍຮັບຈາກການຂາຍໄມ້ ທີ່ຂຸດຄົ້ນໃນເຂດປ່າຜະລິດ ແມ່ນມູນຄ່າຂອງການຂາຍໄມ້ທັງໝົດ ໂດຍຜ່ານການປະມູນ ຫລື ການສົມທຽບລາຄາ.

**ມາດຕາ 3. ຂອບເຂດການນຳໃຊ້**

ລັດຖະບັນຍັດສະບັບນີ້ ມີຜົນບັງຄັບໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການ ທີ່ດຳເນີນກິດຈະການກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະນຳໃຊ້ປ່າຜະລິດ ໃນ ສປປ ລາວ ແລະບໍ່ມີຜົນບັງຄັບໃຊ້ສຳລັບປ່າປ້ອງກັນ ແລະ ປ່າສະຫງວນ.

## ໝວດທີ 2
## ການແບ່ງປັນລາຍຮັບ
## ຈາກການຂາຍໄມ້ ທີ່ຂຸດຄົ້ນໃນເຂດປ່າຜະລິດ

**ມາດຕາ 4. ການແບ່ງປັນລາຍຮັບຈາກການຂາຍໄມ້ ທີ່ຂຸດຄົ້ນໃນເຂດປ່າຜະລິດ**

ລາຍຮັບທີ່ໄດ້ຈາກການຂາຍໄມ້ ທີ່ຂຸດຄົ້ນໃນເຂດປ່າຜະລິດ ແມ່ນໃຫ້ແບ່ງເປັນສອງສ່ວນດັ່ງນີ້:

1. **ສ່ວນທີໜຶ່ງ: ເຈັດສິບສ່ວນຮ້ອຍ (70%) ຂອງລາຍຮັບທັງໝົດ** ເປັນລາຍຮັບງົບມານແຫ່ງລັດ;
2. **ສ່ວນທີສອງ: ສາມສິບສ່ວນຮ້ອຍ (30%) ຂອງລາຍຮັບທັງໝົດ** ເປັນງົບປະມານໃຫ້ແກ່ວຽກງານຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ເປັນຕົ້ນ ປ່າຜະລິດ; ເປັນກອງທຶນພັດທະນາບ້ານ ຫລື ກຸ່ມບ້ານ ທີ່ມີເຂດແດນຕິດກັບປ່າຜະລິດ.

**ມາດຕາ 5. ການແບ່ງປັນ ສ່ວນທີສອງຂອງລາຍຮັບທັງໝົດ**

ສ່ວນແບ່ງທີສອງຂອງລາຍຮັບທັງໝົດໃຫ້ແບ່ງອອກເປັນ ສີ່ (4) ພູດ ເພື່ອນຳໃຊ້ເຂົ້າໃນຈຸດປະສົງ ຕ່າງໆດັ່ງນີ້ :

1. **ພູດທີໜຶ່ງ** ຊາວສ່ວນຮ້ອຍ (20%) ເປັນກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
2. **ພູດທີສອງ** ຊາວສ່ວນຮ້ອຍ (20%) ເປັນທຶນພັດທະນາປ່າຜະລິດໃນທົ່ວປະເທດ;
3. **ພູດທີສາມ** ຊາວສ່ວນຮ້ອຍ (20%) ເປັນທຶນພັດທະນາປ່າຜະລິດບ່ອນທີ່ໄດ້ດຳເນີນ ການຂຸດຄົ້ນໄມ້;
4. **ພູດທີສີ່** ສີ່ສິບສ່ວນຮ້ອຍ (40%) ເປັນທຶນພັດທະນາບ້ານ ຫລື ກຸ່ມບ້ານ ທີ່ເປັນຄູ່ສັນຍາຮ່ວມການຄຸ້ມຄອງປ່າຜະລິດ.

## ໝວດທີ 3
## ການຄຸ້ມຄອງ, ການນຳໃຊ້ ແລະກວດກາ
## ລາຍຮັບຈາກການຂາຍໄມ້ ທີ່ຂຸດຄົ້ນໃນເຂດປ່າຜະລິດ

**ມາດຕາ 6. ການຄຸ້ມຄອງລາຍຮັບຈາກການຂາຍໄມ້ ທີ່ຂຸດຄົ້ນໃນເຂດປ່າຜະລິດ**

ລາຍຮັບຈາກການຂາຍໄມ້ ທີ່ຂຸດຄົ້ນໃນເຂດປ່າຜະລິດຕ້ອງ ໄດ້ມອບເຂົ້າງົບປະມານແຫ່ງລັດ ຕາມກົດໝາຍວ່າດ້ວຍງົບປະມານ ເພື່ອລວມສູນດ້ານລາຍຮັບຢູ່ຄັງເງິນແຫ່ງຊາດ.